ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 201 /ລບ

ນະຄອນຫລວງວຽງຈັນ, ວັນທີ 25.04.2012.

# ດຳລັດ

## ວ່າດ້ວຍ ມາດຕະຖານຄວາມທຸກຍາກ ແລະ ມາດຕະຖານການພັດທະນາ ໄລຍະ 2012-2015

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມ ມະຕິກອງປະຊຸມລັດຖະບານ ປະຈຳເດືອນ ກຸມພາ ປີ 2012 ສະບັບເລກທີ 03/ລບ. ລົງວັນທີ 05/03/2012;
- ອີງຕາມ ໜັງສືສະເໜີ ສະບັບເລກທີ 222/ຄພທສ, ລົງວັນທີ 26/03/2012 ຂອງ ຄະນະພັດທະນາ ຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ.

## ລັດຖະບານ ແຫ່ງ ສປປ ລາວ ອອກດຳລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ກຳນົດມາດຕະຖານຄວາມທຸກຍາກ, ມາດຕະຖານການພັດທະນາ, ຂັ້ນຕອນ, ວິທີການ ກ່ຽວກັບການຈັດຕັ້ງປະຕິບັດ, ອົງການຮັບຜິດຊອບ, ການສະເໜີ ແລະ ຮັບຮອງເອົາ ຄອບຄົວ, ບ້ານ ແລະ ເມືອງພົ້ນທຸກ; ຄອບຄົວ, ບ້ານພັດທະນາ, ບ້ານໃຫຍ່ກາຍເປັນຕົວເມືອງນ້ອຍໃນຊົນນະບົດ ແລະ ເມືອງພັດທະນາ ເພື່ອໃຫ້ບັນດາຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ນຳໄປຈັດຕັ້ງປະຕິບັດໃຫ້ເປັນເອກະພາບກັນ ໃນທົ່ວປະເທດ.

**ມາດຕາ 2. ຄວາມໝາຍ "ຄວາມທຸກຍາກ" ແລະ "ການພັດທະນາ"**

ຄວາມທຸກຍາກ ແມ່ນການຂາດເຂີນ ປັດໄຈພື້ນຖານ ໃນການດຳລົງຊີວິດປະຈຳວັນ ຄື: ຂາດເຂີນສະບຽງອາຫານ ທີ່ບໍ່ສາມາດຕອບສະໜອງພະລັງງານ 2100 ກິໂລກາລໍລີ ຕໍ່ຄົນຕໍ່ມື້, ຂາດເຂີນເຄື່ອງນຸ່ງຫົ່ມທີ່ຈຳເປັນ, ບໍ່ມີທີ່ຢູ່ອາໄສຖາວອນ, ບໍ່ສາມາດໃຊ້ຈ່າຍໃນການປິ່ນ

ປົວເວລາເຈັບເປັນພື້ນຖານ, ບໍ່ສາມາດໃຊ້ຈ່າຍເຂົ້າໃນການສຶກສາຂັ້ນພື້ນຖານ, ບໍ່ມີເງື່ອນໄຂເຂົ້າເຖິງຕາໜ່າງການບໍລິການດ້ານພື້ນຖານໂຄງລ່າງທີ່ຈຳເປັນຂອງສັງຄົມ.

ການພັດທະນາ ແມ່ນຄວາມສຳເລັດຮອບດ້ານ ໃນການສ້າງສາພັດທະນາເຊັ່ນ: ລະບົບການຈັດຕັ້ງມີຄວາມໜັກແໜ້ນເຂັ້ມແຂງ, ປະຊາຊົນມີຄວາມຕື່ນຕົວທາງດ້ານການເມືອງສູງ, ມີສະຕິເຄົາລົບ ແລະ ປະຕິບັດລະບຽບກົດໝາຍ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ ແລະ ມີຄວາມສະຫງົບໜັກແໜ້ນ, ພື້ນຖານດ້ານເສດຖະກິດ-ສັງຄົມ ໄດ້ຮັບການພັດທະນາມີຄວາມໜັກແໜ້ນ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີການປົກປັກຮັກສາສິ່ງແວດລ້ອມແບບຍືນຍົງ, ປະຊາຊົນສາມາດເຂົ້າເຖິງການບໍລິການຂັ້ນພື້ນຖານທີ່ຈຳເປັນແລະຫລຸດພົ້ນອອກຈາກຄວາມທຸກຍາກ.

## ໝວດທີ II
## ການກຳນົດມາດຕະຖານຄວາມທຸກຍາກ

**ມາດຕາ 3. ຫົວໜ່ວຍຄິດໄລ່ ມາດຕະຖານຄວາມທຸກຍາກ**

ຫົວໜ່ວຍຄິດໄລ່ມາດຕະຖານຄວາມທຸກຍາກ ແມ່ນຖືເອົາລາຍຮັບສະເລ່ຍຄິດໄລ່ເປັນເງິນຕໍ່ຄົນຕໍ່ເດືອນເປັນພື້ນຖານໂດຍບໍ່ຈຳແນກ ເພດ, ອາຍຸ ແລະ ຖືເອົາເງິນກີບ ເປັນຫລັກ, ເຊິ່ງໄດ້ກຳນົດດັ່ງນີ້:

- ສະເລ່ຍທົ່ວປະເທດ ແມ່ນ 192.000 ກີບ/ຄົນ/ເດືອນ.
- ສຳລັບເຂດຊົນນະບົດແມ່ນ 180.000 ກີບ/ຄົນ/ເດືອນ.
- ສຳລັບເຂດຕົວເມືອງ ແມ່ນ 240.000 ກີບ/ຄົນ/ເດືອນ.

**ມາດຕາ 4 . ມາດຕະຖານຄວາມທຸກຍາກ ສຳລັບຄອບຄົວ**

ຄອບຄົວທີ່ຈັດວ່າທຸກຍາກ ແມ່ນຄອບຄົວທີ່ມີລາຍຮັບສະເລ່ຍ ຄິດໄລ່ເປັນເງິນກີບຕໍ່ຄົນຕໍ່ເດືອນ ຕ່ຳກວ່າ ມາດຕະຖານທີ່ລະບຸໄວ້ໃນ ມາດຕາ 3 ຂອງດຳລັດສະບັບນີ້.

ຄອບຄົວທີ່ບໍ່ຖືກຈັດວ່າທຸກຍາກແມ່ນຄອບຄົວພົ້ນທຸກ.

**ມາດຕາ 5. ມາດຕະຖານຄວາມທຸກຍາກ ສຳລັບບ້ານ**

ບ້ານທຸກຍາກ ແມ່ນບ້ານທີ່ຂາດເງື່ອນໄຂພື້ນຖານໃນການພັດທະນາດັ່ງນີ້:

1. ບ້ານທີ່ມີຄອບຄົວທຸກຍາກຫຼາຍກວ່າ 50 % ຂຶ້ນໄປ ຂອງຈຳນວນຄອບຄົວທັງໝົດພາຍໃນບ້ານ;
2. ບ້ານທີ່ບໍ່ມີໂຮງຮຽນປະຖົມ ຫຼືໃຊ້ເວລາຍ່າງ ໄປຮຽນຢູ່ໂຮງຮຽນທີ່ຢູ່ໃກ້ບ້ານທີ່ສຸດ ຫລາຍກວ່າ 1 ຊົ່ວໂມງ;

3. ບ້ານທີ່ບໍ່ມີຖົງຢາປະຈຳບ້ານ ຫຼືຮ້ານຂາຍຢາ, ຖ້າຈະໄປຫາສຸກສາລາ ຫລື ໂຮງໝໍເມືອງທີ່ໃກ້ທີ່ສຸດ ຕ້ອງໃຊ້ເວລາຍ່າງຫລາຍກວ່າ 2 ຊົ່ວໂມງ;
4. ບ້ານທີ່ບໍ່ມີນ້ຳສະອາດຊົມໃຊ້ ເຊັ່ນ: ນ້ຳສ້າງມີແທ່ງ, ນ້ຳບາດານ, ນ້ຳລິນ ແລະ ອື່ນໆ;
5. ບ້ານທີ່ບໍ່ມີເສັ້ນທາງຄົມມະນາຄົມເຂົ້າເຖິງ ຫລື ມີແຕ່ທຽວໄດ້ລະດູດຽວ. ບ້ານທີ່ບໍ່ໄດ້ຈັດວ່າທຸກຍາກ ແມ່ນບ້ານພົ້ນທຸກ.

## ມາດຕາ 6. ມາດຕະຖານຄວາມທຸກຍາກສຳລັບເມືອງ

ເມືອງທີ່ຈັດວ່າທຸກຍາກ ແມ່ນເມືອງທີ່ມີບ້ານທຸກຫລາຍກວ່າ 51 % ຂຶ້ນໄປຂອງ ຈຳນວນບ້ານທັງໝົດ ພາຍໃນເມືອງ.

ເມືອງທີ່ບໍ່ຈັດວ່າທຸກຍາກ ແມ່ນເມືອງພົ້ນທຸກ.

# ໝວດທີ III
# ການກຳນົດມາດຕະຖານການພັດທະນາ

## ມາດຕາ 7. ມາດຕະຖານຄອບຄົວພັດທະນາ

ຄອບຄົວພັດທະນາ ແມ່ນຄອບຄົວ ທີ່ບັນລຸເງື່ອນໄຂ ມາດຕະຖານການພັດທະນາ ດັ່ງນີ້:

1. ສະມາຊິກພາຍໃນຄອບຄົວ ມີຄວາມຕື່ນຕົວທາງດ້ານການເມືອງ, ມີຄວາມສາມັກຄີພາຍໃນ ແລະ ພາຍນອກດີ, ມີສະຕິເຄົາລົບ ແລະ ປະຕິບັດລະບຽບກົດໝາຍເປັນຢ່າງດີ;
2. ເປັນຄອບຄົວພົ້ນທຸກ ແລະ ມີແຫລ່ງລາຍຮັບໝັ້ນຄົງ;
3. ເປັນຄອບຄົວປ້ອງກັນຄວາມສະຫງົບດີ;
4. ເປັນຄອບຄົວປອດຄະດີ;
5. ເປັນຄອບຄົວປອດຢາເສບຕິດ;
6. ເປັນຄອບຄົວວັດທະນະທຳ;
7. ເປັນຄອບຄົວແບບຢ່າງດ້ານສາທາລະນະສຸກ;
8. ເດັກນ້ອຍໃນເກນອາຍຸໄດ້ເຂົ້າໂຮງຮຽນ ແລະຜູ້ໃຫຍ່ອາຍຸ 15 ເຖິງ 45 ປີ ໄດ້ສຳເລັດການສຶກສາພາກບັງຄັບ;
9. ໄດ້ຊົມໃຊ້ໄຟຟ້າໃນ ຫລື ນອກລະບົບຢ່າງເປັນປົກກະຕິ;
10. ເປັນຄອບຄົວປະຕິບັດສິດສະເໝີພາບລະຫວ່າງຍິງ-ຊາຍ ແລະ ປາສະຈາກການໃຊ້ຄວາມຮຸນແຮງໃນຄອບຄົວ ໂດຍສະເພາະ ຕໍ່ແມ່ຍິງ ແລະ ເດັກນ້ອຍ.

## ມາດຕາ 8. ມາດຕະຖານບ້ານພັດທະນາ

ບ້ານພັດທະນາ ແມ່ນບ້ານທີ່ບັນລຸມາດຕະຖານເງື່ອນໄຂໃນການພັດທະນາດັ່ງນີ້:

1. ລະບົບການຈັດຕັ້ງບ້ານໜັກແໜ້ນ ແລະ ເຂັ້ມແຂງ, ໃນນັ້ນ ມີໜ່ວຍພັກໄດ້ຢັ້ງຢືນເປັນໜ່ວຍພັກແຂງ, ມີອົງການປົກຄອງບ້ານ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ເຄື່ອນໄຫວປະຕິບັດໜ້າທີ່ ຢ່າງເປັນປົກກະຕິ;
2. ປະຊາຊົນພາຍໃນບ້ານມີຄວາມຕື່ນຕົວການເມືອງ, ມີສະຕິເຄົາລົບ ແລະ ປະຕິບັດລະບຽບກົດໝາຍບ້ານເມືອງດີ, ມີຄວາມສາມັກຄີ ຮັກແພງ ຊ່ວຍເຫລືອ ເຊິ່ງກັນ ແລະ ກັນຢ່າງແໜ້ນແຟ້ນ;
3. ຈຳນວນຄອບຄົວພັດທະນາ ກວມຫລາຍກວ່າ 85% ຂອງຈຳນວນຄອບຄົວທັງໝົດ ຢູ່ພາຍໃນບ້ານ;
4. ເປັນບ້ານແບບຢ່າງດ້ານປ້ອງກັນຊາດດີ;
5. ເປັນບ້ານປ້ອງກັນຄວາມສະຫງົບດີ;
6. ເປັນບ້ານປອດຄະດີ;
7. ເປັນບ້ານປອດຢາເສບຕິດ;
8. ມີກຸ່ມການຜະລິດແລະ ບໍລິການສິນຄ້າ;
9. ມີຄັງສະສົມ ຫລື ກອງທຶນຂອງບ້ານ ຫລື ສາມາດເຂົ້າເຖິງບໍລິການດ້ານສິນເຊື່ອ;
10. ບ້ານມີແຜນຜັງບ້ານທີ່ດີ ແລະ ມີການຈັດຕັ້ງປະຕິບັດຕາມແຜນຜັງ;
11. ມີການຈັດສັນພູມລຳເນົາຄົງທີ່ ແລະ ບ່ອນທຳມາຫາກິນຖາວອນໃຫ້ປະຊາຊົນ;
12. ມີເສັ້ນທາງຄົມມະນາຄົມເຂົ້າເຖິງບ້ານ ທຽວໄດ້ຕະຫລອດປີ;
13. ມີຕາຄ່າຍໄຟຟ້າໃນລະບົບ;
14. ເປັນບ້ານແບບຢ່າງທາງດ້ານສາທາລະນະສຸກ;
15. ເປັນບ້ານສຳເລັດການສຶກສາພາກບັງຄັບ (ຈົບຊັ້ນປະຖົມ);
16. ເປັນບ້ານວັດທະນະທຳ;
17. ມີຫ້ອງການ, ສະໂມສອນບ້ານ ແລະ ສູນຂໍ້ມູນຂ່າວສານຂອງບ້ານ;
18. ເປັນບ້ານທີ່ມີການປະຕິບັດສິດສະເໝີພາບ ຍິງ-ຊາຍ
19. ມີສະຖານທີ່ສາທາລະນະຮັບໃຊ້ກິດຈະການລວມຂອງບ້ານ ຫລື ການຫລິ້ນກິລາປະເພດໃດໜຶ່ງ.

**ມາດຕາ 9. ມາດຕະຖານບ້ານໃຫຍ່ກາຍເປັນຕົວເມືອງນ້ອຍໃນຊົນນະບົດ**

ບ້ານໃຫຍ່ກາຍເປັນຕົວເມືອງນ້ອຍໃນຊົນນະບົດ ແມ່ນບ້ານທີ່ບັນລຸເງື່ອນໄຂໃນການພັດທະນາດັ່ງນີ້:

1. ເປັນບ້ານພັດທະນາ;
2. ມີເສັ້ນທາງຄົມມະນາຄົມເຂົ້າເຖິງບ້ານທຽວໄດ້ຕະຫລອດປີ ຢ່າງສະດວກ, ເຊື່ອມຈອດເຖິງເມືອງ ແລະ ບ້ານອື່ນໆອ້ອມຂ້າງ;
3. ມີພື້ນຖານການຜະລິດ ແລະ ປຸງແຕ່ງເປັນສິນຄ້າ ທີ່ໝັ້ນຄົງ;
4. ມີຕະຫລາດຖາວອນ ທີ່ມີການຊື້-ຂາຍ ເປັນປະຈຳ;
5. ມີສູນບໍລິການໄປສະນີ ຫລື ໂທລະຄົມມະນາຄົມ;

6. ມີໜ່ວຍ ຫລື ສູນບໍລິການເຕັກນິກກະສິກຳ ແລະ ປ່າໄມ້;
7. ມີໜ່ວຍບໍລິການຂອງທະນາຄານ ຫລື ໜ່ວຍບໍລິການ ການເງິນຈຸລະພາກໃດໜຶ່ງ;
8. ມີສຸກສາລາ ຫລື ໂຮງໝໍນ້ອຍ;
9. ມີລະບົບນ້ຳປະປາຊຸມຊົນ;
10. ມີຕາຂ່າຍໄຟຟ້າ ໃນລະບົບ;
11. ມີໂຮງຮຽນປະຖົມສົມບູນ ແລະ ມັດທະຍົມຕົ້ນ ຫລື ມັດທະຍົມປາຍ;
12. ບ້ານຢູ່ເຂດຊົນນະບົດພູດອຍມີພົນລະເມືອງ ແຕ່ໜຶ່ງພັນຄົນຂຶ້ນໄປ, ບ້ານຢູ່ເຂດຊົນນະບົດທົ່ງພຽງແມ່ນ ມີພົນລະເມືອງແຕ່ ສາມພັນຄົນຂຶ້ນໄປ.

## ມາດຕາ 10. ມາດຕະຖານເມືອງພັດທະນາ

ເມືອງພັດທະນາ ແມ່ນເມືອງທີ່ບັນລຸມາດຕະຖານເງື່ອນໄຂໃນການພັດທະນາດັ່ງນີ້:

1. ມີບ້ານພັດທະນາກວມ 85% ຂຶ້ນໄປ ແລະ ສຳລັບເມືອງຊົນນະບົດ ມີບ້ານໃຫຍ່ ກາຍເປັນຕົວເມືອງນ້ອຍໃນຊົນນະບົດຢ່າງນ້ອຍ 2 ບ້ານຂຶ້ນໄປ;
2. ລະບົບການຈັດຕັ້ງຂອງເມືອງມີຄວາມໜັກແໜ້ນ ແລະ ເຂັ້ມແຂງ, ມີໜ່ວຍພັກແຂງຮູ້ນຳພາຮອບດ້ານ ກວມຫລາຍກວ່າ 85% ຂຶ້ນໄປ;
3. ເປັນເມືອງ ທີ່ມີຄວາມເປັນລະບຽບຮຽບຮ້ອຍ ແລະ ມີຄວາມສະຫງົບໜັກແໜ້ນ;
4 ເທດສະບານເມືອງມີແຜນຜັງເມືອງທີ່ດີ, ມີການຈັດຕັ້ງປະຕິບັດຕາມແຜນຜັງເປັນຢ່າງດີ;
5. ມີພື້ນຖານເສດຖະກິດທີ່ໜັກແໜ້ນ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ;
6. ສາມາດກຸ້ມຕົນເອງດ້ານລາຍຈ່າຍງົບປະມານປົກກະຕິ;
7. ມີເສັ້ນທາງຄົມມະນາຄົມເຂົ້າເຖິງເມືອງຫຼວງໄດ້ຕະຫລອດປີ ຢ່າງສະດວກ, ເຊື່ອມຈອດເຖິງແຕ່ລະບ້ານພາຍໃນເມືອງ;
8. ເທດສະບານເມືອງມີລະບົບນ້ຳປະປາຫລື ນ້ຳປະປາຊຸມຊົນຊົມໃຊ້.
9. ເທດສະບານເມືອງມີຕາຄ່າຍໄຟຟ້າໃນລະບົບ;
10. ມີສູນຝຶກຫລື ໂຮງຮຽນວິຊາຊີບໃດໜຶ່ງ;
11. ມີສູນບໍລິການເຕັກນິກກະສິກຳ ແລະ ປ່າໄມ້;
12 ມີໂຮງໝໍທີ່ໄດ້ມາດຕະຖານ;
13. ມີຕະຫລາດຖາວອນ ທີ່ມີການຊື້-ຂາຍເປັນປະຈຳ;
14. ມີລະບົບການບໍລິການໄປສະນີ ແລະໂທລະຄົມມະນາຄົມ;
15 ມີໜ່ວຍບໍລິການ ຫລື ສາຂາ ຂອງທະນາຄານໃດໜຶ່ງ.

## ໝວດທີ IV
## ວິທີການຈັດຕັ້ງປະຕິບັດ

**ມາດຕາ 11. ການສະເໜີ, ຢັ້ງຢືນ ແລະ ຮັບຮອງ**

1. ການສະເໜີ, ຢັ້ງຢືນ ແລະ ຮັບຮອງ ຄອບຄົວພົ້ນທຸກ ແລະຄອບຄົວພັດທະນາແມ່ນ ນາຍບ້ານ ເປັນຜູ້ສະເໜີ ຕໍ່ເຈົ້າເມືອງ ແລະ ເຈົ້າເມືອງ ເປັນຜູ້ອອກຂໍ້ຕົກລົງຮັບຮອງ, ບົນພື້ນຖານ ມີການກວດກາ, ປະເມີນຜົນ ແລະ ຢັ້ງຢືນ ຈາກໜ່ວຍງານຕ່າງໆ ທີ່ກ່ຽວຂ້ອງຂອງເມືອງ;
2. ການສະເໜີ, ຢັ້ງຢືນ ແລະ ຮັບຮອງ ບ້ານພົ້ນທຸກ, ບ້ານພັດທະນາ, ບ້ານໃຫຍ່ກາຍເປັນຕົວເມືອງນ້ອຍໃນຊົນນະບົດ ແມ່ນເຈົ້າເມືອງ ເປັນຜູ້ສະເໜີຕໍ່ເຈົ້າແຂວງ ແລະ ເຈົ້າແຂວງ ເປັນຜູ້ອອກຂໍ້ຕົກລົງຮັບຮອງ, ບົນພື້ນຖານມີການກວດກາ, ປະເມີນຜົນ ແລະ ຢັ້ງຢືນຈາກໜ່ວຍງານຕ່າງໆ ທີ່ກ່ຽວຂ້ອງຂອງແຂວງ;
3. ການສະເໜີ, ຢັ້ງຢືນ ແລະ ຮັບຮອງເມືອງພົ້ນທຸກ ແລະ ເມືອງພັດທະນາ ແມ່ນເຈົ້າແຂວງ ເປັນຜູ້ສະເໜີຕໍ່ນາຍົກລັດຖະມົນຕີ ແລະ ນາຍົກລັດຖະມົນຕີ ເປັນຜູ້ອອກຂໍ້ຕົກລົງຮັບຮອງ, ບົນພື້ນຖານມີການກວດກາ, ປະເມີນຜົນ ແລະ ຢັ້ງຢືນຈາກໜ່ວຍງານຕ່າງໆທີ່ກ່ຽວຂ້ອງຂອງສູນກາງ.

**ມາດຕາ 12. ການປັບປຸງ ແລະ ການປ່ຽນແປງມາດຕະຖານ**

ວິທີການປັບປຸງ ແລະ ການປ່ຽນແປງມາດຕະຖານ ໃຫ້ປະຕິບັດດັ່ງນີ້:

1. ມາດຕະຖານຄວາມທຸກຍາກແລະມາດຕະຖານການພັດທະນາ ແມ່ນຈະໄດ້ມີການປັບປຸງ ແລະ ປ່ຽນແປງໄປຕາມອັດຕາໄພເງິນເຟີ້, ຄ່າຄອງຊີບ ແລະ ການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;
2. ຄະນະພັດທະນາຊົນນະບົດແລະລຶບລ້າງຄວາມທຸກຍາກຂັ້ນສູນກາງ ເປັນໃຈກາງສົມທົບ ກັບກະຊວງ ທີ່ກ່ຽວຂ້ອງຄົ້ນຄວ້າ, ປັບປຸງມາດຕະຖານຄວາມທຸກຍາກ ແລະ ມາດຕະຖານການພັດທະນາ ແລະ ນຳສະເໜີລັດຖະບານພິຈາລະນາ;
3. ທຸກໆ 5 ປີ ໃນຕອນທ້າຍ ຂອງການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງລັດ ຕ້ອງມີການທົບທວນ, ກວດກາ ແລະ ປະເມີນຜົນລະດັບຊາດ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 13. ການຈັດຕັ້ງປະຕິບັດ**

ມອບໃຫ້ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ ສົມທົບກັບກະຊວງແຜນການ ແລະ ການລົງທຶນ ອອກບົດແນະນຳສະເພາະ ໃນການຈັດຕັ້ງປະຕິບັດດຳລັດ

ສະບັບນີ້; ພ້ອມທັງຕິດຕາມ, ຊຸກຍູ້, ກວດກາ, ປະເມີນຜົນ ແລະ ລາຍງານຜົນການຈັດຕັ້ງປະຕິບັດ ມາດຕະຖານ ໃຫ້ລັດຖະບານໃນແຕ່ລະປີ;

ມອບໃຫ້ບັນດາກະຊວງ, ອົງການທຽບເທົ່າຂັ້ນສູນກາງ, ນະຄອນຫຼວງວຽງຈັນ ແລະ ບັນດາ ແຂວງ ໃນທົ່ວປະເທດ ເປັນຜູ້ຈັດຕັ້ງປະຕິບັດຕົວຈິງຕາມພາລະບົດບາດຂອງຕົນ ແລະ ລາຍງານຜົນ ການຈັດຕັ້ງປະຕິບັດ ໃຫ້ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ ເປັນແຕ່ລະປີ ເພື່ອສັງລວມລາຍງານຕໍ່ລັດຖະບານ;

ບັນດາກະຊວງ, ອົງການທຽບເທົ່າຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ ໃນທົ່ວປະເທດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ14. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ; ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ຕາງໜ້າລັດຖະບານ,
ນາຍົກລັດຖະມົນຕີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ★ ນາຍົກລັດຖະມົນຕີ ★

**ທອງສິງ ທຳມະວົງ**